ມື້ນີ້ ໂອກາດດີໄດ້ເຂົ້າ   ຢ້ຽມລາວເກົ່າແອບຊາຍ
ນັກກະວີລາວມີຫຼາຍ    ກ່າຍກອງນອງລົ້ນ
ມີຫຼາຍຄົນຫຼາຍໜ້າ   ທັງນໍາຫາຊູ້ເກົ່າ
ຊູ້ບໍ່ທັນໄດ້ເວົ້າ    ບາດຕອນເຖົ້າຈຶ່ງໄຕ່ນໍາ ແມ່ນບໍ?

ຈໍາປາແດງ ຜູ້ນັ້ນ     ເພີ່ນດັ້ນດຸ່ງເດີນມາ ແຕ່ໃສນໍ?
ຂ່າວຄາວຫາຄົນຮັກ  ຜູ້ລັກໜີແຕ່ຄາວກີ້
ຝາກໃຫ້ເວທີກວ້າງ   ຫາທາງສືບເບິ່ງ
ເຫິງນານມາທີ່ຖ້າ  ຈໍາປາອ້າຍໄດ້ແຕ່ຄອງ

ສານສົ່ງຂ່າວປ່າວຮ້ອງ   ຫານ້ອງອຸ່ນຜູ້ຄົນດັງ ໃຜເດນໍ?
ຫຼັ່ງນໍ້າຕານໍາແຟນ       ທົ່ວແດນດິນກວ້າງ
ໄປຫຼາຍທາງຫຼາຍບ້ານ  ເວລານານຈົນສຸດເຂດ
ຫຼາຍປະເທດກໍຜ່ານເຂົ້າ  ນໍາຫາເຈົ້ານິ່ງສມອນ

ກາບກອນອ້າຍຊາບຊຶ້ງ    ຊ່າງດຶງດູດຊາວລາວ
ສາວອອນລາຍຄົນດັງ    ນັ່ງຢູ່ໃສນໍນ້ອງ
ຮູ້ຢູ່ບໍ? ຈໍາປາແດງຫົວໃຈຂ້ອງ  ໝອງໃນຍ້ອນຕາມອຸ່ນ
ປະກາດເປັນອຸ້ນໆ        ບຸນຊູ້ນ້ອງຢູ່ໃສ ? ເດນໍ

ແຕ່ວ່າ ຈໍາປາແດງທ່ານນັ້ນໄດ້   ມີຄູ່ຄຽງສອງແລ້ວເດ
ສັງມາໝາຍໃຈປອງ        ໄຕ່ຕາມຫານ້ອງ
ສາວຫຼັກເຈັດນາງຂັດຂ້ອງ  ຢາກລອງຖາມທ່ານເບິ່ງ
ຖ້າທ່ານພໍຕອບໄດ້          ຈົ່ງໄຂແຈ້ງຕໍ່ສູ່ຄົນ   ເບິ່ງດູ

ສົມວ່າໃຈດັ້ນດົ້ນ          ຄົ້ນຄ່ວງທວງຫາ
ສັງມາມີເມັຽແພງ        ຊ່າງຖແລງແປງເວົ້າ

ເອົາຫຣັງນໍມາຢັ້ງ ຢືນໃຈວ່າຮັກອຸ່ນ
ບຸນທີ່ເຄີຍໄດ້ຮ່ວມສ້າງ ກະຮາມຮ້າງຫ່າງໄກ ແລ້ວເດ

ຢ່າໄດ້ຄຶດວ່ານ້ອງ ກ້າວກ່າຍເກີນໄປ
ຊາຍໃຫ້ເປັນຊາຍຜົງ ແຮ່ຕົມຢ່າກົມກ້ຽວ
ຫຼຽວເບິ່ງເມັຽຢູ່ທາງຂ້າງ ທາງຫົວໃຈໃຫ້ຊູ້ເກົ່າ
ເອົາຄວາມຂົມເຊື່ອງໄວ້ ຄວາມຫວານໃຫ້ຜູ້ຢູ່ໄກ

ສົງສັຍຊາຍບໍ່ແທ້ ມີແຕ່ແຮ່ແກມຕົມ
ມີແຕ່ຄາລົມຫວານ ຫວ່ານນ້ຳຕານປົນງ້ອນ
ຍາມຢາກຊອນໃຈຊູ້ ສຽງຈູຈິນ້ຳຕານໃສ່
ບາດເມັຽໄດ້ແຕ່ ງ້ອນ ຊອນໄຂ້ແລ້ວປ່ອຍໃຈ

ຢ່າໄດ້ຄຶດວ່ານ້ອງ ກ້າວກ່າຍເກີນໄປ
ຫົວໃຈຊາຍຢ່າໄຫຼຫຼົງ ໄຜ່ພະວົງໝາຍຊ້ອນ
ມີເມັຽຊອນຢູ່ທາງຂ້າງ ສັງເອົາໃຈປັນແບ່ງ
ຈຳປາແດງ ກິ່ນເຈົ້າຫອມດັ່ງອິ້ມ ຊີ້ຕົນຊ້ອນຢູ່ໃນ ແມ່ນບໍ?

ໂດຍະ ສາວຫຼັກເຈັດ